

# ເອກະລັກຂອງຊົນເຜົ່າ ມົ້ງ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe’de’ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
## ຂອງຫ້ອງການກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: "ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ". ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມປື້ມກ່ຽວກັບຊົນເຜົ່າ ມົ້ງ ຄືນໃໝ່ໂດຍແຍກຈາກປື້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າ ມົ້ງ ໃນ ສປປ ລາວ. ປື້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ມົ້ງ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ, ບາງຮີດ ແລະ ປະເພນີ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ມົ້ງ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕື່ມກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປ ລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫ້ອງການກົມຊົນເຜົ່າ**

# ແຜນທີ່ການແຈກຢາຍພົນລະເມືອງ

ປັດຈຸບັນຊົນເຜົ່າ ມົ້ງ ດຳລົງຊີວິດ ແລະ ຕັ້ງຖິ່ນຖານ ພູມລຳເນົາຢ່າງຫຼວງຫຼາຍໃນບັນດາແຂວງຂອງພາກເໜືອຂອງລາວເຮົາລົງຮອດເມືອງ ທ່າແຂກ ແຂວງ ຄຳມ່ວນ. ນອກຈາກນີ້, ຊົນເຜົ່າ ມົ້ງ ຍັງມີຢູ່ປະເທດ ຈີນ, ຫວຽດນາມ, ລາຊະອານາຈັກ ໄທ ແລະ ປະເທດອື່ນໆ ອີກ. ຊົນເຜົ່າ ມົ້ງ ຢູ່ລາວມີປະຊາກອນທັງໝົດ 451.946 ຄົນ, ຍິງ 224.257 ຄົນ, ເທົ່າກັບ 8,0 % ຂອງພົນລະເມືອງທົ່ວປະເທດ. (ຜົນການສຳຫຼວດພົນລະເມືອງຄັ້ງ ທີ III ປີ 2005 ).




● ຊົນເຜົ່າ ມົ້ງ ທີ່ແຈກຢາຍຢູ່ແຕ່ລະບ່ອນ

- ແຂວງ ຄຳມ່ວນ: ເມືອງ ທ່າແຂກ
- ນະຄອນຫຼວງ: ເມືອງ ໄຊທານີ, ເມືອງ ນາຊາຍທອງ, ເມືອງ ປາກງື່ມ
- ແຂວງ ບໍລິຄຳໄຊ: ເມືອງ ວຽງທອງ, ເມືອງ ຄຳເກີດ, ເມືອງ ບໍລິຄັນ, ເມືອງ ປາກກະດິງ, ເມືອງ ປາກຊັນ
- ແຂວງ ໄຊຍະບູລີ: ເມືອງ ເງິນ, ເມືອງ ໄຊຍະບູລີ, ເມືອງ ຄອບ, ເມືອງ ຊຽງຮອນ, ເມືອງ ຫົງສາ
- ແຂວງ ຜົ້ງສາລີ: ເມືອງ ໃໝ່, ເມືອງ ຂວາ, ເມືອງ ສຳພັນ
- ແຂວງ ຫຼວງນ້ຳທາ: ເມືອງ ວຽງພູຄຳ, ເມືອງ ລອງ, ເມືອງ ສິງ, ເມືອງ ຫຼວງນ້ຳທາ
- ແຂວງ ບໍ່ແກ້ວ: ເມືອງ ເມິງ, ເມືອງ ຕົ້ນຜຶ້ງ, ເມືອງ ຫ້ວຍຊາຍ
- ແຂວງ ຫົວພັນ: ມີຢູ່ທຸກເມືອງ
- ແຂວງ ຊຽງຂວາງ: ມີຢູ່ທຸກເມືອງ
- ແຂວງ ຫຼວງພະບາງ: ມີຢູ່ທຸກເມືອງ
- ແຂວງ ອຸດົມໄຊ: ມີຢູ່ທຸກເມືອງ
- ແຂວງ ວຽງຈັນ: ມີຢູ່ທຸກເມືອງ
- ແຂວງ ໄຊສົມບູນ: ມີຢູ່ທຸກເມືອງ

# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ



ພາບໂດຍ: ອົງການ SDC

ມົ້ງແມ່ນຊົນເຜົ່າໜຶ່ງທີ່ດຳລົງຊີວິດຢູ່ດິນແດນປະເທດລາວເຮົານັບແຕ່ກາງສະຕະວັດທີ XIX ເປັນຕົ້ນມາ. ຊົນເຜົ່ານີ້ໄດ້ອົບພະຍົບເຄື່ອນຍ້າຍມາຈາກຕິເບດ, ຊີບີລີ, ມົງໂກນ ເຂົ້າສູ່ປະເທດ ຈີນ ແລະ ຕັ້ງຫຼັກແຫຼ່ງຢູ່ລຸ່ມແມ່ນ້ຳເຫຼືອງ (ຮວງຮາ). ຍ້ອນສົງຄາມຈຶ່ງໄດ້ອົບພະຍົບ ແລະ ເຄື່ອນຍ້າຍຖອຍລົງມາທາງພາກໃຕ້ຂອງປະເທດ ຈີນ ແລ້ວເຂົ້າສູ່ປະເທດ ຫວຽດນາມ, ລາວ ແລະ ລາຊະອານາຈັກໄທ.

ຊົນເຜົ່າ ມົ້ງ ເອີ້ນຕົນເອງວ່າ: “ມົ້ງ”, ສຳລັບຊົນເຜົ່າ ມົ້ງ ຢູ່ລາວການທີ່ເອີ້ນຊື່ມົ້ງແມ່ນວ່າເຂົາເຈົ້າມັກ ແລະ ເພິ່ງພໍໃຈ, ທັງແມ່ນຊື່ດັ້ງເດີມ ແລະ ເປັນຊື່ທີ່ນຳໃຊ້ທາງລັດຖະການໃນປັດຈຸບັນ. ຄຳວ່າ: “ມົ້ງ” ຕາມຄວາມໝາຍຂອງພາສາເຂົາເຈົ້າແປວ່າ: “ຄົນ”. ຊົນເຜົ່າ ມົ້ງ ຢູ່ລາວປະກອບດ້ວຍຫຼາຍແຊງເຊັ່ນ: ມົ້ງຂາວ (ມົ້ງເດີ້), ມົ້ງລາຍ (ມົ້ງເລງ, ມົ້ງຊີ, ມົ້ງຢົ້ວ) ແລະ ມົ້ງດຳ, ມົ້ງດູ້).

# ອາຊີບຂອງຊົນເຜົ່າ ມົ້ງ

ການດຳລົງຊີວິດທາງດ້ານເສດຖະກິດຂອງຊົນເຜົ່າ ມົ້ງ ສ່ວນຫຼາຍແມ່ນປະກອບອາຊີບທາງດ້ານການກະເສດເປັນຕົ້ນ: ເຮັດໄຮ່ປູກເຂົ້າຈ້າວ ແລະ ສາລີ. ນອກຈາກນີ້, ຍັງປູກພືດຜັກ, ມັນຊະນິດຕ່າງໆ ຮັບໃຊ້ຊີວິດປະຈຳວັນ ແລະ ນິຍົມການລ້ຽງສັດຫຼາຍປະເພດ ເຊັ່ນ: ງົວ, ຄວາຍ, ມ້າ, ແບ້, ໝູ, ໝາ, ເປັດ ແລະ ໄກ່. ສຳລັບຜູ້ຊາຍມີຄວາມຊຳນານໃນການຕີເຫຼັກ ແລະ ແມ່ຍິງມີຄວາມຄ່ອງແຄ້ວ ແລະ ຊຳນານໃນການຫຍິບປັກຖັກແສ່ວແບບລວດລາຍຕ່າງໆ ສະເພາະທີ່ເຂົາເຈົ້າມັກນິຍົມກັນ. ພ້ອມກັນນັ້ນຍັງມີຄວາມເອົາໃຈໃສ່ໃນການເລືອກແນວພັນສັດ, ແນວພັນພືດເພື່ອຕອບສະໜອງຜົນຜະລິດໃຫ້ໄດ້ຮັບຜົນດີຂຶ້ນເລື້ອຍໆ. ປັດຈຸບັນຊົນເຜົ່າ ມົ້ງ ຈຳນວນໜຶ່ງຫັນມາສູ່ອາຊີບການເຮັດນາປູກເຂົ້າຈ້າວ ແລະ ຄ້າຂາຍຢູ່ຕາມເຂດທົ່ງພຽງ.



ພາບໂດຍ: ກົມຊົນເຜົ່າ





ພາບໂດຍ: ກົມຊົນເຜົ່າ

# ທີ່ຕັ້ງບ້ານ ແລະ ເຮືອນ

ຕາມປະເພນີແລ້ວຊົນເຜົ່າ ມົ້ງ ມັກຢູ່ເຮືອນຕິດພື້ນດິນ, ການທີ່ເຂົາເຈົ້າຕ້ອງສັງເກດວ່າມີການຄະລຳອັນໃດບໍ? ໂດຍສະເພາະແມ່ນເຄື່ອງໝາຍຕາແຫຼວ ຫຼື ຟົດໄມ້ດິບທີ່ຕິດແປະກັບປະຕູທາງເຂົ້າໃນເຮືອນຂອງຊົນເຜົ່າມົ້ງ. ຫ້າມບໍ່ໃຫ້ນັ່ງອີງເສົາກາງເຮືອນ ແລະ ແຕະຕ້ອງຮ້ານຜີ ພ້ອມກັບການນອນຂວາງເບື້ອງເທິງຫ້ອງໄວ້ຮ້ານຜີ.



ພາບໂດຍ: ກົມຊົນເຜົ່າ



# ເຄື່ອງນຸ່ງຫົ່ມ

ເປັນທີ່ຍອມຮັບກັນແລ້ວວ່າໃນສັງຄົມປັດຈຸບັນການທີ່ຮັກສາເຄື່ອງນຸ່ງຫົ່ມ, ເອ້ຍ້ອງໄດ້ດີກວ່າເພີ່ນນັ້ນກໍແມ່ນຊົນເຜົ່າ ມົ້ງ ນັ້ນເອງ, ຊຶ່ງມັນສະແດງອອກໃຫ້ເຫັນຢ່າງຈະແຈ້ງໃນທົ່ວໆ ໄປບໍ່ວ່າຈະເປັນບຸນປະເພນີ ຫຼື ວັນທຳມະດາພວກເຮົາກໍຈະພົບເຫັນ. ເຄື່ອງນຸ່ງຫົມທີ່ເປັນເອກະລັກຂອງເຜົ່າຕົນເອງເຊັ່ນ: ສຳລັບແມ່ຍິງຈະເປັນເສື້ອ ແລະ ນຸ່ງກະໂປງທີ່ມີລວດລາຍໃນການປັກແສ່ວ ແລະ ເຄື່ອງປະດັບເອ້ຍ້ອງຫຼາຍສີສັນເຊັ່ນ: ແມ່ນມີປອກແຂນ, ສາຍຄໍ, ຕ້າງຫູ ແລະ ໝວກ. ສຳລັບຜູ້ຊາຍກໍຈະນຸ່ງເສື້ອ, ໂສ້ງສີດຳທີ່ມີການປັກແສ່ວລວດລາຍຕ່າງໆ.



ພາບໂດຍ: ອົງການ SDC



ພາບໂດຍ: ກົມຊົນເຜົ່າ


ພາບໂດຍ: ອົງການ SDC



ພາບໂດຍ: ອົງການ SDC



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ອົງການ SDC



ພາບໂດຍ: ອົງການ SDC



ພາບໂດຍ: ອົງການ SDC



ພາບໂດຍ: ອົງການ SDC

# ອາຫານ ແລະ ເຄື່ອງດື່ມ

ໃນສະໄໝກ່ອນ ແລະ ປັດຈຸບັນຊົນເຜົ່າ ມົ້ງ ມັກກິນເຂົ້າຈ້າວ ແລະ ກິນອາຫານປະເພດຕ່າງໆເຊັ່ນ: ແກງຈືດຊີ້ນໝູໃສ່ຜັກກາດຕີນໜີ ແລະ ຊີ້ນໝູສາມຊັ້ນຢ້າງໄຟເພື່ອໄວ້ກິນດົນ. ດື່ມນ້ຳຊາ, ນ້ຳດິບ ແລະ ມັກສູບຝິ່ນ.



ຖ່າຍພາບໂດຍ: ນ ທົງຄຳ ຈັນປະເສີດ



ພາບໂດຍ: ອົງການ SDC



ພາບໂດຍ: ກົມຊົນເຜົ່າ



ພາບໂດຍ: ATML

# ຄວາມເຊື່ອຖື ແລະ ງານບຸນ

ນັບແຕ່ໃດມາໃນຊີວິດຕົວຈິງຂອງສັງຄົມຊົນເຜົ່າ ມົ້ງ ຍັງສາມາດຮັກສາເອກະລັກໃນດ້ານຄວາມເຊື່ອຖືແຕ່ບັນພະບູລຸດໄວ້ໃຫ້ແກ່ຄົນລຸ້ນລູກ, ຫຼານຈົນເຖິງທຸກວັນນີ້ເຊັ່ນ: ນັບຖືຜີພໍ່, ຜີແມ່, ຜີເຮືອນ, ຜີເຈົ້າຖິ່ນ, ເຈົ້າຖານ, ຜີຟ້າ, ຜີແຖນ ແລະ ອື່ນໆ. ຜີເຮືອນຈະລວມຫຼາຍສັນຍາລັກ ແລະ ເປັນສິ່ງຄະລໍາຂອງແຂກຄົນອື່ນເຊັ່ນ: ຮ້ານນ້ອຍແຂວນຢູ່ຝາເຮືອນ, ແຜ່ນເຈ້ຍນ້ອຍຕິດຝາເບື້ອງເທິງຫ້ອງກາງເຮືອນ, ເສົາກາງເຮືອນ, ບໍ່ລ່ວງຫ້ອງນອນທີ່ແອ້ມໄວ້, ບໍ່ນອນຂວາງຕາມລວງຍາວຂອງເຮືອນ, ມີຝົດໄມ້ດິບ ຫຼື ຕາແຫຼວຕິດຢູ່ປາກປະຕູ, ແມ່ນເຂົ້າເຮືອນບໍ່ໄດ້ ຫຼື ຕາມຮີດຂອງຊົນເຜົ່າ ມົ້ງ ຜູ່ໃດເປັນແຂກມາແຕ່ໄກ, ກ່ອນຈະຍ່າງເຂົ້າເຮືອນແມ່ນຕ້ອງຖາມ ຫຼື ຂໍອະນຸຍາດຈາກເຈົ້າຂອງເຮືອນເສຍກ່ອນແລ້ວຈິ່ງເຂົ້າໄດ້.

ມີທັງກິນ, ມີການອວຍພອນເຊິ່ງກັນ ແລະ ກັນ, ທັງມ່ວນຊື່ນ, ທັງເປັນການສະຫຼຸບຜົນຜະລິດຂອງແຕ່ລະຄອບຄົວໃນໜຶ່ງປີຜ່ານມາ. ບຸນກິນຈຽງສ່ວນຫຼາຍແມ່ນການຫຼິ້ນມ່ວນຊື່ນຂອງບ່າວ - ສາວ, ການສະແດງເຖິງຄວາມຮັ່ງມີໃນແຕ່ລະຄອບຄົວ, ຊຸດເຄື່ອງນຸ່ງເປັນການສະແດງເຖິງສີໄມ້ລາຍມືຂອງແມ່ຍິງ, ທັງເປັນການຊອກຫາຄູ່ຄອງຂອງຄູ່ບ່າວ-ສາວເພື່ອຈະສ້າງຄອບຄົວນຳກັນ ຫຼື ພໍ່ແມ່ຊອກຫາລູກໄພ້-ລູກເຂີຍ. ດ້ວຍການໂຍນໝາກຄອນຮ່ວມກັນ, ມີບາງທ້ອງຖິ່ນຈະຫຼິ້ນຍາວເປັນເວລາ 15 ວັນ ຫຼື 30 ວັນ ແລະ ຍັງມີການແຂ່ງຂັນມ້າ, ຫຼິ້ນເປົ່າແຄນ, ງົວຊົນງົວ, ຕີໝາກຂ່າງ ແລະ ອື່ນໆ.



ພາບໂດຍ: ກົມຊົນເຜົ່າ





ພາບໂດຍ: ກົມຊົນເຜົ່າ

ສຳລັບງານບຸນປະຈຳຊົນເຜົ່າ ມົ້ງ ໄດ້ແກ່ບຸນກິນຈຽງຊຶ່ງຈັດຂຶ້ນໃນມື້ແຮມ 15 ຄ່ຳເດືອນ 12 ລາວ ຫຼັງຈາກການເກັບກ່ຽວເຄື່ອງປູກຂອງຝັງ, ຊຶ່ງມົ້ງເອີ້ນກັນວ່າ: "ນໍ່ເປ້ເຈົາ", ແລະ ມີລາຍລະອຽດດັ່ງນີ້: ມີການແກ້ເຄາະໃນມື້ແຮມ 15 ຄ່ຳ ເດືອນ 12 ລາວ, ເອີ້ນວ່າ: "ເກົາເຕີ້ໄກ້". ຈາກນັ້ນຈຶ່ງເຮັດພິທີກິນຈຽງໄກ່ ແລະ ສູ່ຂວັນປີໃໝ່ໃນຕອນຄ່ຳ, ພ້ອມກັນເຮັດກິນ, ເຮັດທານ ແລະ ກະກຽມສະຫຼອງບຸນກິນຈຽງໃນມື້ຂຶ້ນ 1 ຄ່ຳ ເດືອນຈຽງ. ໂດຍມີການຂ້າໝູ, ງົວ ຫຼື ຄວາຍ ຕາມເງື່ອນໄຂຂອງແຕ່ລະຄອບຄົວ ແລະ ມີພາເຂົ້າໃຫ້ຊາວບ້ານມາກິນທັງມີການມັດແຂນອວຍພອນເຊິ່ງກັນ ແລະ ກັນໃຫ້ທຸກຄົນມີສຸຂະພາບແຂງແຮງ. ເມື່ອກ່ອນພາເຂົ້ານັ້ນຈະມີອາຫານ 30 ເຍື່ອງ, ດັ່ງນັ້ນ, ຜູ້ຄົນທັງຫຼາຍຈຶ່ງມັກເອີ້ນກັນວ່າ: ກິນສາມສິບ ຄວາມຈິງແລ້ວບຸນກິນຈຽງໃນປັດຈຸບັນ



ພາບໂດຍ: ກົມຊົນເຜົ່າ

# ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ



ພາບໂດຍ: ATML

ເຄື່ອງດົນຕີພື້ນເມືອງປະຈໍາຊົນເຜົ່າ ມົ້ງ: ແຄນ, ຄ້ອງ, ກອງ , ແຊ່ງ ທີ່ນໍາເອົາມາເປັນເຄື່ອງດົນຕີໃນເວລາມີງານບຸນ, ງານດອງ, ງານເຮັດຮີດຂອງພວກເຂົາເຈົ້າກໍຈະນໍາມາເສບ ແລະ ຂັບລໍາ ຫຼື ເຂົາເຈົ້າເອີ້ນວ່າ: ຂັບມົ້ງ ແລະ ມີບົດເພງຮ້ອງ, ເຄື່ອງດົນຕີທີ່ໂດດເດັ່ນກວ່າໝູ່ຂອງຊົນເຜົ່າມົ້ງ ແມ່ນເປົ່າແຄນ.



ພາບໂດຍ: ອົງການ SDC



ພາບໂດຍ: ອົງການ SDC



ພາບໂດຍ: ອົງການ ATML





# ພາສາປາກເວົ້າ

ຊົນເຜົ່າ ມົ້ງ ມີພາສາປາກເວົ້າສະເພາະຂອງຕົນເອງ ພ້ອມກັນນັ້ນ, ເຂົາເຈົ້າຍັງມີຕົວໜັງສືຂຽນສອງລະບົບດ້ວຍກັນຄື: ລະບົບທີ່ໃຊ້ຕົວອັກສອນລາຕິນ ແລະ ລະບົບຕົວໜັງສືທີ່ປະດິດແຕ່ງຂອງທ່ານເລົາຜົງ, ພາສາຂອງຊົນເຜົ່າ ມົ້ງ ແຕ່ລະແຂວງຈະມີຄວາມແຕກຕ່າງກັນເລັກນ້ອຍຕາມແຕ່ລະທ້ອງຖິ່ນ. ແຕ່ສາມາດເຂົ້າໃຈເຊິ່ງກັນ ແລະ ກັນ.

# ການສົມທຽບ
# ພາສາ ລາວ ກັບ ພາສາ ມົ້ງ

| ລຳດັບ | ພາສາ ລາວ | ພາສາມົ້ງ |
|---|---|---|
| 01 | ສະບາຍດີ | ຍໍ້ຢົ້ງ |
| 02 | ໂຊກດີ | ມົ່ວມົງ |
| 03 | ຂອບໃຈ | ອົວໂຈ |
| 04 | ຂໍໂທດ | ທໍຈີ |
| 05 | ເຈົ້າຊື່ຫຍັງ? | ກໍ່ຮູລີຈາ? |
| 06 | ເຮັດຫຍັງຢູ່? | ອົວດາຈີ໋? |
| 07 | ກິນເຂົ້າແລ້ວບໍ? | ນໍ່ມໍເລີລໍຈີ໋ເຕົາ? |
| 08 | ລາກ່ອນ | ມູເລີ |
| 09 | ພົບກັນໃໝ່ | ຊີຈີ່ດົວ |
| 10 | ບໍ່ເປັນຫຍັງ | ຈີອົວຈາ |

*ຂໍ້ມູນໂດຍ: ທ່ານ ເຢ່ຍເກີຢ່າ ໝໍ່ຈໍ່ຈົງຕົວ*



# ເອກະລັກຂອງຊົນເຜົ່າ ມົ້ງ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe’de’ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
## ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: “ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ”. ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈິ່ງໄດ້ຮຽບຮຽງ ແລະ ຈັດພິມປື້ມກ່ຽວກັບຊົນເຜົ່າ ມົ້ງ ຄືນໃໝ່ໂດຍແຍກຈາກປື້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າ ມົ້ງ ໃນ ສປປ ລາວ. ປື້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ມົ້ງ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ, ບາງຮີດ ແລະ ປະເພນີ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ມົ້ງ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕື່ມກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປ ລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ
ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແຈກຢາຍພົນລະເມືອງ

ປັດຈຸບັນຊົນເຜົ່າ ມົ້ງ ດໍາລົງຊີວິດ ແລະ ຕັ້ງຖິ່ນຖານ ພູມລໍາເນົາຢ່າງຫຼວງຫຼາຍໃນບັນດາແຂວງຂອງພາກເໜືອຂອງລາວເຮົາລົງຮອດເມືອງ ທ່າແຂກ ແຂວງ ຄໍາມ່ວນ. ນອກຈາກນີ້, ຊົນເຜົ່າ ມົ້ງ ຍັງມີຢູ່ປະເທດ ຈີນ, ຫວຽດນາມ, ລາຊະອານາຈັກ ໄທ ແລະ ປະເທດອື່ນໆ

ອີກ. ຊົນເຜົ່າ ມົ້ງ ຢູ່ລາວ ມີປະຊາກອນທັງໝົດ 451.946 ຄົນ, ຍິງ 224.257 ຄົນ, ເທົ່າກັບ 8,0 % ຂອງພົນລະເມືອງ ທົ່ວປະເທດ. (ຜົນການສໍາຫຼວດພົນລະເມືອງຄັ້ງ ທີ III ປີ 2005 ).




ຊົນເຜົ່າ ມົ້ງ ທີ່ແຈກຢາຍຢູ່ແຕ່ລະບ່ອນ

- ແຂວງ ຄໍາມ່ວນ: ເມືອງ ທ່າແຂກ
- ນະຄອນຫຼວງ: ເມືອງ ໄຊທານີ, ເມືອງ ນາຊາຍທອງ, ເມືອງ ປາກງື່ມ
- ແຂວງ ບໍລິຄໍາໄຊ: ເມືອງ ວຽງທອງ, ເມືອງ ຄໍາເກີດ, ເມືອງ ບໍລິຄັນ, ເມືອງ ປາກກະດິງ, ເມືອງ ປາກຊັນ
- ແຂວງ ໄຊຍະບູລີ: ເມືອງ ເງິນ, ເມືອງ ໄຊຍະບູລີ, ເມືອງ ຄອບ, ເມືອງ ຊຽງຮ່ອນ, ເມືອງ ຫົງສາ
- ແຂວງ ຜົ້ງສາລີ: ເມືອງ ໃໝ່, ເມືອງ ຂວາ, ເມືອງ ສໍາພັນ
- ແຂວງ ຫຼວງນໍ້າທາ: ເມືອງ ວຽງພູຄໍາ, ເມືອງ ລອງ, ເມືອງ ສິງ, ເມືອງ ຫຼວງນໍ້າທາ
- ແຂວງ ບໍ່ແກ້ວ: ເມືອງ ເມິງ, ເມືອງ ຕົ້ນເຜິ້ງ, ເມືອງ ຫ້ວຍຊາຍ
- ແຂວງ ຫົວພັນ: ມີຢູ່ທຸກເມືອງ
- ແຂວງ ຊຽງຂວາງ: ມີຢູ່ທຸກເມືອງ
- ແຂວງ ຫຼວງພະບາງ: ມີຢູ່ທຸກເມືອງ
- ແຂວງ ອຸດົມໄຊ: ມີຢູ່ທຸກເມືອງ
- ແຂວງ ວຽງຈັນ: ມີຢູ່ທຸກເມືອງ
- ແຂວງ ໄຊສົມບູນ: ມີຢູ່ທຸກເມືອງ



ພາບໂດຍ: ATML

# ຄວາມເຊື່ອຖື ແລະ ງານບຸນ

ນັບແຕ່ໃດມາໃນຊີວິດຕົວຈິງຂອງສັງຄົມຊົນເຜົ່າ ມົ້ງ ຍັງສາມາດຮັກສາເອກະລັກໃນດ້ານຄວາມເຊື່ອຖືແຕ່ບັນພະບູລຸດໄວ້ໃຫ້ແກ່ຄົນລຸ້ນລູກ, ຫຼານຈົນເຖິງທຸກວັນນີ້ເຊັ່ນ: ນັບຖືຜີພໍ່, ຜີແມ່, ຜີເຮືອນ, ຜີເຈົ້າຖິ່ນ, ເຈົ້າຖານ, ຜີຟ້າ, ຜີແຖນ ແລະ ອື່ນໆ. ຜີເຮືອນຈະລວມຫຼາຍສັນຍາລັກ ແລະ ເປັນສິ່ງຄະລຳຂອງແຂກຄົນອື່ນເຊັ່ນ: ຮ້ານນ້ອຍແຂວນຢູ່ຝາເຮືອນ, ແຜ່ນເຈ້ຍນ້ອຍຕິດຝາເບື້ອງເທິງຫ້ອງກາງເຮືອນ, ເສົາກາງເຮືອນ, ບໍ່ລ່ວງຫ້ອງນອນທີ່ແອ້ມໄວ້, ບໍ່ນອນຂວາງຕາມລວງຍາວຂອງເຮືອນ, ມີຟົດໄມ້ດິບ ຫຼື ຕາແຫຼວຕິດຢູ່ປາກປະຕູ, ແມ່ນເຂົ້າເຮືອນບໍ່ໄດ້ ຫຼື ຕາມຮີດຂອງຊົນເຜົ່າ ມົ້ງ ຜູ່ໃດເປັນແຂກມາແຕ່ໄກ, ກ່ອນຈະຍ່າງເຂົ້າເຮືອນແມ່ນຕ້ອງຖາມ ຫຼື ຂໍອະນຸຍາດຈາກເຈົ້າຂອງເຮືອນເສຍກ່ອນແລ້ວຈິ່ງເຂົ້າໄດ້.

ມີທັງກິນ, ມີການອວຍພອນເຊິ່ງກັນ ແລະ ກັນ, ທັງມ່ວນຊື່ນ, ທັງເປັນການສະຫຼຸບຜົນຜະລິດຂອງແຕ່ລະຄອບຄົວໃນໜຶ່ງປີຜ່ານມາ. ບຸນກິນຈຽງສ່ວນຫຼາຍແມ່ນການຫຼີ້ນມ່ວນຊື່ນຂອງບ່າວ - ສາວ, ການສະແດງເຖິງຄວາມຮັ່ງມີໃນແຕ່ລະຄອບຄົວ, ຊຸດເຄື່ອງນຸ່ງເປັນການສະແດງເຖິງສີໄມ້ລາຍມືຂອງແມ່ຍິງ, ທັງເປັນການຊອກຫາຄູ່ຄອງຂອງຄູ່ບ່າວ-ສາວເພື່ອຈະສ້າງຄອບຄົວນຳກັນ ຫຼື ພໍ່ແມ່ຊອກຫາລູກໄພ້-ລູກເຂີຍ. ດ້ວຍການໂຍນໝາກຄອນຮ່ວມກັນ, ມີບາງທ້ອງຖິ່ນຈະຫຼີ້ນຍາວເປັນເວລາ 15 ວັນ ຫຼື 30 ວັນ ແລະ ຍັງມີການແຂ່ງຂັນມ້າ, ຫຼີ້ນເປົ່າແຄນ, ງົວຊົນງົວ, ຕີໝາກຂ່າງ ແລະ ອື່ນໆ.



ພາບໂດຍ: ກົມຊົນເຜົ່າ




ພາບໂດຍ: ກົມຊົນເຜົ່າ

ສຳລັບງານບຸນປະຈຳຊົນເຜົ່າ ມົ້ງ ໄດ້ແກ່ບຸນກິນຈຽງຊຶ່ງຈັດຂຶ້ນໃນມື້ແຮມ 15 ຄ່ຳເດືອນ 12 ລາວ ຫຼັງຈາກການເກັບກ່ຽວເຄື່ອງປູກຂອງຝັງ, ຊຶ່ງມົ້ງເອີ້ນກັນວ່າ: "ນໍ່ເປ້ເຈົາ", ແລະ ມີລາຍລະອຽດດັ່ງນີ້: ມີການແກ້ເຄາະໃນມື້ແຮມ 15 ຄ່ຳ ເດືອນ 12 ລາວ, ເອີ້ນວ່າ: "ເກົາເຕົ້ໄກ້". ຈາກນັ້ນຈຶ່ງເຮັດພິທີກິນຈຽງໄກ່ ແລະ ສູ່ຂວັນປີໃໝ່ໃນຕອນຄ່ຳ, ພ້ອມກັນເຮັດກິນ, ເຮັດທານ ແລະ ກະກຽມສະຫຼອງບຸນກິນຈຽງໃນມື້ຂຶ້ນ 1 ຄ່ຳ ເດືອນຈຽງ. ໂດຍມີການຂ້າໝູ, ງົວ ຫຼື ຄວາຍ ຕາມເງື່ອນໄຂຂອງແຕ່ລະຄອບຄົວ ແລະ ມີພາເຂົ້າໃຫ້ຊາວບ້ານມາກິນທັງມີການມັດແຂນອວຍພອນເຊິ່ງກັນ ແລະ ກັນໃຫ້ທຸກຄົນມີສຸຂະພາບແຂງແຮງ. ເມື່ອກ່ອນພາເຂົ້ານັ້ນຈະມີອາຫານ 30 ເຍື່ອງ, ດັ່ງນັ້ນ, ຜູ້ຄົນທັງຫຼາຍຈຶ່ງມັກເອີ້ນກັນວ່າ: ກິນສາມສິບ ຄວາມຈິງແລ້ວບຸນກິນຈຽງໃນປັດຈຸບັນ



ພາບໂດຍ: ກົມຊົນເຜົ່າ

# ເຄື່ອງດົນຕີ ແລະ ສິລະປະພື້ນເມືອງ

ເຄື່ອງດົນຕີພື້ນເມືອງປະຈຳຊົນເຜົ່າ ມົ້ງ: ແຄນ, ຄ້ອງ, ກອງ , ແຊ່ງ ທີ່ນຳເອົາມາເປັນເຄື່ອງດົນຕີໃນເວລາມີງານບຸນ, ງານດອງ, ງານເຮັດຮີດຂອງພວກເຂົາເຈົ້າກໍຈະນຳມາເສບ ແລະ ຂັບລຳ ຫຼື ເຂົາເຈົ້າເອີ້ນວ່າ: ຂັບມົ້ງ ແລະ ມີບົດເພງຮ້ອງ, ເຄື່ອງດົນຕີທີ່ໂດດເດັ່ນກວ່າໝູ່ຂອງຊົນເຜົ່າມົ້ງ ແມ່ນເປົ່າແຄນ.



ພາບໂດຍ: ATML



ພາບໂດຍ: ອົງການ SDC



ພາບໂດຍ: ອົງການ SDC



ພາບໂດຍ: ອົງການ ATML





# ພາສາປາກເວົ້າ

ຊົນເຜົ່າ ມົ້ງ ມີພາສາປາກເວົ້າສະເພາະຂອງຕົນເອງ ພ້ອມກັນນັ້ນ, ເຂົາເຈົ້າຍັງມີຕົວໜັງສືຂຽນສອງລະບົບດ້ວຍກັນຄື: ລະບົບທີ່ໃຊ້ຕົວອັກສອນລາຕິນ ແລະ ລະບົບຕົວໜັງສືທີ່ປະດິດແຕ່ງຂອງທ່ານເລົາຝົງ, ພາສາຂອງຊົນເຜົ່າ ມົ້ງ ແຕ່ລະແຂວງຈະມີຄວາມແຕກຕ່າງກັນເລັກນ້ອຍຕາມແຕ່ລະທ້ອງຖິ່ນ. ແຕ່ສາມາດເຂົ້າໃຈເຊິ່ງກັນ ແລະ ກັນ.

# ການສົມທຽບ
# ພາສາ ລາວ ກັບ ພາສາ ມົ້ງ

| ລຳດັບ | ພາສາ ລາວ | ພາສາມົ້ງ |
|---|---|---|
| 01 | ສະບາຍດີ | ຍໍ້ຢົ້ງ |
| 02 | ໂຊກດີ | ມົ່ວມົງ |
| 03 | ຂອບໃຈ | ອົວໂຈ |
| 04 | ຂໍໂທດ | ທໍຈີ |
| 05 | ເຈົ້າຊື່ຫຍັງ? | ກໍ່ຮູລີຈາ? |
| 06 | ເຮັດຫຍັງຢູ່? | ອົວດາຈີ໋? |
| 07 | ກິນເຂົ້າແລ້ວບໍ? | ນໍ່ມໍເລີລໍຈີ໋ເຕົາ? |
| 08 | ລາກ່ອນ | ມູເລີ |
| 09 | ພົບກັນໃໝ່ | ຊີຈີ່ດົວ |
| 10 | ບໍ່ເປັນຫຍັງ | ຈີອົວຈາ |

*ຂໍ້ມູນໂດຍ: ທ່ານ ເຍ່ຍເກີຢ່າ ໝໍ່ຈໍ່ຈົງຕົວ*